ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 105 / ອອປສ

ນະຄອນຫຼວງວຽງຈັນ,ວັນທີ 20.12.10

# ຂໍ້ຕົກລົງ

ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບການຈັດຊື້
ວັດຖຸອຸປະກອນ,ຍານພາຫະນະຕ່າງໆຂອງອົງການໄອຍະການ
ປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນທົ່ວປະເທດ.

- ອີງຕາມ : ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງ ສປປ ລາວສະບັບປັບປຸງປີ 2009.
- ອີງຕາມ : ດຳລັດ ວ່າດ້ວຍການປະມູນຈັດຊື້ສິນຄ້າ,ການກໍ່ສ້າງ,ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ( ສະບັບປັບປຸງ ) ເລກທີ 03/ນຍ,ລົງວັນທີ 9 ມັງກອນ 2004.
- ອີງຕາມ : ລະບຽບການ,ການຈັດຊື້ສິນຄ້າ,ການກໍ່ສ້າງ,ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ເລກທີ 0063/ກງ,ລົງວັນທີ 12 ມີນາ 2004.

## ຫົວໜ້າ ອົງການໄອຍະການປະຊາຊົນສູງສຸດຕົກລົງ:

**ມາດຕາ 1:** ແຕ່ງຕັ້ງຄະນະກຳມະການຮັບຜິດຊອບການຈັດຊື້ວັດຖຸອຸປະກອນ ແລະ ຍານພາຫະນະຮັບໃຊ້ຕ່າງໆພາຍໃນອົງການໄອຍະການປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນ ແຂວງ ທົ່ວປະເທດປະຈຳສົກງົບປະມານປີ 2010-2011 ປະກອບດ້ວຍບັນດາທ່ານດັ່ງລຸ່ມນີ້:

I. ຄະນະຊີ້ນຳລວມ:

1. ທ່ານ ລັງສີ ສີບຸນເຮືອງ ຮອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ ເປັນຫົວໜ້າຄະນະ ຊີ້ນຳລວມ
2. ທ່ານ ສົມບູນ ລາດສະບົວສີ ຫົວໜ້າຫ້ອງການ ເປັນຮອງຫົວໜ້າຄະນະຊີ້ນຳ
3. ທ່ານ ສົມພູ ໂພທິສາ ຜູ້ຮັກສາການຫົວໜ້າກົມແຜນການ ແລະ ການເງິນ ເປັນຮອງຫົວໜ້າຄະນະຊີ້ນຳ.
4. ທ່ານ ຄຳກອງອຸເທນ ແກ້ວມະໂນ ຫົວໜ້າອົງການໄອຍະການປະຊາຊົນພາກກາງ ເປັນກຳມະການ.
5. ທ່ານ ຜາວົງ ຫລຽນນຸວົງ ຫົວໜ້າກົມຄ້າຍດັດສ້າງ ເປັນກຳມະການ.
6. ທ່ານ ລິນທອນ ສາຍບຸນມາ ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ເປັນກຳມະການ.
7. ທ່ານ ສອນສະຫວັນ ແສງອາໄພ ຫົວໜ້າກົມກວດກາຄະດີແພ່ງ ເປັນກຳມະການ.
8. ທ່ານ ສີສູນທອນ ສໍພາບມີໄຊ ຫົວໜ້າກົມກວດກາຄະດີອາຍາ ເປັນກຳມະການ.
9. ທ່ານ ຈັນທີ ໂປລີວັນ ຫົວໜ້າກົມກວດກາ ທົ່ວໄປ ເປັນກຳມະການ.
10. ທ່ານ ໄຊຊະນະ ໂຄດພູທອນ ຫົວໜ້າກົມຈັດຕັ້ງ-ພະນັກງານ ເປັນກຳມະການ.

11. ທ່ານ ຜູ້ຕາງໜ້າ ກົມງົບປະມານ ກະຊວງການເງິນ ເປັນກຳມະການ.

12. ທ່ານ ຜູ້ຕາງໜ້າ ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ເປັນກຳມະການ.

13. ທ່ານ ຜູ້ຕາງໜ້າ ກົມລົງທຶນຂອງລັດ ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ.

II. ຄະນະປະສານງານຂອງຄະນະກຳມະການຮັບຜິດຊອບຊີ້ນຳລວມ ແລະ ສະເພາະຫ້ອງການ ອອປສ.

1. ທ່ານ ບຸນມາ ພົນສະນິດ ຮອງຫົວໜ້າຫ້ອງການ ເປັນຫົວໜ້າຄະນະ

2. ທ່ານ ບຸນກອງ ສຸກວິໄຊ ຮອງຫົວໜ້າກົມແຜນການ ແລະ ການເງິນ ເປັນຮອງຫົວໜ້າຄະນະ

3. ທ່ານ ບຸນຈັນ ອຳມະສອນ ຫົວໜ້າພະແນກບັນຊີ ແລະ ຄັງເງິນສົດ ເປັນ ກຳມະການ.

4. ທ່ານ ສົມພອນໄຊ ເມືອງປາກ ຫົວໜ້າພະແນກບໍລິຫານ ເປັນ ກຳມະການ.

5. ທ່ານ ສຸດໃຈ ສໍລະສົມ ຫົວໜ້າພະແນກແຜນການ ແລະ ງົບປະມານ ເປັນ ກຳມະການ.

**ມາດຕາ 2 : ວ່າດ້ວຍຄວາມຮັບຜິດຊອບ,ສິດ ແລະ ໜ້າທີ່ ຂອງຄະນະກຳມະການ.**

I. ຄະນະກຳມະການຮັບຜິດຊອບຊີ້ນຳລວມ:

1. ຊີ້ນຳຫ້ອງການ ( ພະແນກຄຸ້ມຄອງບໍລິຫານ )ໃຫ້ສ້າງແຜນໃນການປະມູນ,ການທາບທາມລາຄາການຈັດຊື້ຕ່າງໆ.
2. ກວດກາບັນດາເອກະສານ ທີ່ທາງຫ້ອງການເປັນຜູ້ກະກຽມ ເພື່ອການປະມູນ ແລະ ການຈັດຊື້ຕ່າງໆ.
3. ຄົ້ນຄວ້າຜົນຂອງການປະມູນ ແລະ ການທາບທາມລາຄາໃນການຈັດຊື້ ເພື່ອລາຍງານໃຫ້ຫົວໜ້າ ອອປສ ເປັນຜູ້ຮັບຮອງເອົາຜູ້ຊະນະການປະມູນ ແລະ ການທາບທາມລາຄາດັ່ງກ່າວ.
4. ຕິດຕາມກວດກາ ບັນດາພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດຖືກຕ້ອງຕາມລະບຽບກົດໝາຍ.

II. ຄະນະປະສານງານຂອງຄະນະກຳມະການຮັບຜິດຊອບລວມ ແລະ ສະເພາະຫ້ອງການ ອອປສ.

1. ກະກຽມເອກະສານປະມູນ ແລະ ເອກະສານທາບທາມລາຄາໃນການຈັດຊື້.
2. ດຳເນີນ ແລະ ປະເມີນການປະມູນ ແລະ ການທາບທາມລາຄາ ເພື່ອລາຍງານຄະນະຊີ້ນຳ ຫຼື ຫົວໜ້າ ອອປສ ຮັບຮອງເອົາຜົນການປະມູນ,ການທາບທາມລາຄາ ແລະ ຜູ້ຊະນະການປະມູນ ຫຼື ການທາບທາມລາຄາ.
3. ແຈ້ງຜົນໃຫ້ຜູ້ເຂົ້າຮ່ວມການປະມູນ ແລະ ການທາບທາມລາຄາ.
4. ເກັບຮັກສາທຸກໆເອກະສານການບັນທຶກກ່ຽວກັບການດຳເນີນການປະມູນ ແລະ ການທາບທາມລາຄາການຈັດຊື້ຕ່າງໆ.
5. ສະຫລຸບ ສັງລວມຜົນສຳເລັດການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ຄະນະຊີ້ນຳ ແລະ ຫົວໜ້າ ອອປສ ຮັບຊາບແຕ່ລະໄລຍະເພື່ອໃຫ້ທິດຊີ້ນຳ.

**ມາດຕາ** 3: ມອບໃຫ້ຄະນະກຳມະການຮັບຜິດຊອບຊີ້ນຳລວມ, ຫ້ອງການ ບັນດາກົມຢູ່ ອອປສ,ທ່ານທີ່ຖືກແຕ່ງຕັ້ງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ ຢ່າງເຂັ້ມງວດ.

**ມາດຕາ** 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ສົມພັນ ແພງຄຳມີ